ສຳນັກງານ ຄຄຂ
ເລກທີ.....0754
ວັນທີ.....02 AUG 2019
ໂທລະສັບ 021 217770

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ: 31 /ຫກ

ນະຄອນຫຼວງວຽງຈັນ, ວັນທີ: 02 ສິງຫາ 2019

# ບົດລາຍງານ

## ການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
## ປະຈຳອາທິດທີ 15-19/07/2019 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

### I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນໝັ້ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

### II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດແຂງຄ່າຂຶ້ນ 0,15% ເມື່ອທຽບໃສ່ເອີໂຣ ເນື່ອງຈາກເສດຖະກິດ ສ. ອາເມຣິກາອອກມາດີ ເຫັນໄດ້ຈາກດັດຊະນີຄວາມເຊື່ອໝັ້ນຂອງຜູ້ບໍລິໂພກຂອງ ສ. ອາເມລິກາ ປະຈຳເດືອນ 07/2019 ຢູ່ທີ່ລະດັບ 98,40 ຈຸດ ຊຶ່ງເພີ່ມຂຶ້ນຈາກລະດັບ 98,20 ຈຸດ ໃນເດືອນຜ່ານມາ ແລະ ຈຳນວນປະຊາຊົນທີ່ຂໍສະຫວັດດີການຫວ່າງງານຕໍ່ເນື່ອງ ມີຈຳນວນຫຼຸດລົງຈາກຈຳນວນ 1,73 ລ້ານຄົນມາຢູ່ໃນລະດັບ 1,69 ລ້ານຄົນ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 08-12/07/2019 | ອາທິດນີ້ 15-19/07/2019 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1258 | 1,1241 | 0,15% |
| ເຢນ/ໂດລາ | 108,46 | 107,63 | 0,77% |
| ບາດ/ໂດລາ | 30,890 | 30,790 | 0,32% |
| ເປໂຊ/ໂດລາ | 51,13 | 51,07 | 0,12% |
| ຣູເປັຍ/ໂດລາ | 14.015,00 | 13.940,00 | 0,54% |
| ໂດລາສິງກະໂປ/ໂດລາ | 1,3602 | 1,3588 | 0,10% |
| ຢວນ/ໂດລາ | 6,8799 | 6,8795 | 0,01% |

**1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ**

- ລາຄານ້ຳມັນ ຫຼຸດລົງ 7,56% ຈາກ 60,69 ໂດລາ/ບາເຣວ ມາເປັນ 56,10 ໂດລາ/ບາເຣວ ເນື່ອງຈາກລາຄານ້ຳມັນດິບໄດ້ຮັບແຮງກົດດັນມາຈາກແທ່ງຂຸດເຈາະນ້ຳມັນດິບຂອງ ສ. ອາເມລິກາ ໃນອ່າວແມັກຊິໂກ ກັບມາດຳເນີນງານໄດ້ເປັນປົກກະຕິ ພາຍຫຼັງທີ່ພາຍຸໂຊນຮ້ອນແບຣີໄດ້ຜ່ານພົ້ນໄປ;
- ລາຄາຄຳ ເພີ່ມຂຶ້ນ 2,44% ຈາກ 1.406,20 ໂດລາ/ອອນ ມາເປັນ 1.440,51 ໂດລາ/ອອນ ເນື່ອງຈາກເງິນໂດລາມີຄວາມຜັນຜວນ ຮັດໃຫ້ນັກລົງທຶນເຂົ້າຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພື່ອປ້ອງກັນຄວາມສ່ຽງ.

**2. ສະພາບເງິນຕາພາຍໃນ**

**2.1 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 07/2019 ຄາດວ່າຈະຢູ່ໃນລະດັບ 2,80%.

**2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2**

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0,17% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 16,03%;
- ປະລິມານເງິນ M2 ຫຼຸດລົງ 0,49% ທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,40%.

**2.3 ສະພາບອັດຕາແລກປ່ຽນພາຍໃນ**

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ເງິນກີບທຽບໃສ່ເງິນໂດລາອ່ອນຄ່າລົງ 0,08% ແລະ ອ່ອນຄ່າລົງ 0,18% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 1,68% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 7,44% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 08-12/07/2019 | | | ອາທິດນີ້ 15-19/07/2019 | | | % ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະຄານ[1] | | | | | | | | | | | | |
| ໂດລາ | 8.740,01 | 8.766,66 | 8.754,58 | 8.750,22 | 8.774,99 | 8.761,37 | -0,12% | -0,09% | -0,08% | -1,70% | -1,68% | -1,68% |
| ບາດ | 287,25 | 288,60 | 287,93 | 287,22 | 289,34 | 288,45 | 0.01% | -0.26% | -0,18% | -7,32% | -7,56% | -7,44% |

**2.4 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ**

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (12-18/07/2019) ເຫັນວ່າ: ທະນາຄານທຸລະກິດ (ທທກ) ຊື້ເງິນໂດລາສຸດທິ 3,69 ລ້ານໂດລາ (ໃນນີ້ຊື້ເງິນໂດລາໄດ້ 32,01 ລ້ານໂດລາ ແລະ ຂາຍເງິນໂດລາໄດ້ 28,32 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 98,87 ລ້ານບາດ (ໃນນີ້ຊື້ເງິນບາດໄດ້ 191,39 ລ້ານບາດ ແລະ ຂາຍເງິນບາດໄດ້ 290,26 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 21,56% ແລະ ເງິນບາດເພີ່ມຂຶ້ນ 0,54%;
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ບໍ່ມີການເຄື່ອນໄຫວ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 1,70 ລ້ານໂດລາ ແລະ ເງິນບາດ ຈຳນວນ 5,00 ລ້ານບາດ;

1% ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

- ການຊື້-ຂາຍລະຫວ່າງ ທຫລ ກັບພາກສ່ວນອື່ນໆ: ທຫລ ໄດ້ດູດຊຶມໂດຍການຂາຍເງິນໂດລາ ຈຳນວນ 100,64 ລ້ານໂດລາ.

ສະພາບການຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດກ່ອນ 05-11/07/2019 | | ອາທິດນີ້ 15-19/07/2019 | | (%) +ເພີ່ມຂຶ້ນ/-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **21,79** | **133,78** | **32,01** | **191,39** | **46,90%** | **43,06%** |
| - ທ/ຄທຸລະກິດລັດ | 9,26 | 45,00 | 7,52 | 114,21 | -18,79% | 153,80% |
| - ທ/ຄທຸລະກິດອື່ນໆ | 12,53 | 88,78 | 24,49 | 77,18 | 95,45% | -13,07% |
| 2. ການຂາຍເງິນຕາຕ່າງປະເທດ | **27,84** | **345,29** | **28,32** | **290,26** | **1,72%** | **-15,94%** |
| - ທ/ຄທຸລະກິດລັດ | 9,15 | 94,86 | 9,17 | 93,25 | 0,22% | -1,70% |
| - ທ/ຄທຸລະກິດອື່ນໆ | 18,69 | 250,43 | 19,15 | 197,01 | 2,46% | -21,33% |
| ຊື້-ຂາຍສຸດທິ ທທກ | **-6,05** | **-211,51** | **3,69** | **-98,87** | **-160,99%** | **-53,26%** |
| - ຜິດດ່ຽງຊື້-ຂາຍ | -27,77% | -158,10% | 11,53% | -51,66% | -141,51% | -67,33% |
| - ມູນຄ່າການຊື້-ຂາຍ | **49,63** | **479,07** | **60,33** | **481,65** | **21,56%** | **0,54%** |
| 3. ການຊື້-ຂາຍລະຫວ່າງ ທຫລກັບ ທທກ | **-0,57** | **0,00** | **0,00** | **0,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 0,57 | 0,00 | 0,00 | 0,00 | | |
| 4. ຊື້-ຂາຍລະຫວ່າງ ທທກ ດ້ວຍກັນ | **1,36** | **6,00** | **1,70** | **5,00** | | |
| 5. ທຫລ ກັບ ພາກສ່ວນອື່ນໆ | **-100,90** | **0,00** | **-100,64** | **0,00** | | |
| -ທຫລ ຊື້ ຈາກພາກສ່ວນອື່ນໆ | 0,00 | 0,00 | 0,00 | 0,00 | | |
| -ທຫລ ຂາຍ ໃຫ້ພາກສ່ວນອື່ນໆ | 100,90 | 0,00 | 100,64 | 0,00 | | |

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ

ທະນາຄານແຫ່ງ ສປປ ລາວ ໄດ້ມີກະແສເງິນໄຫຼອອກສຸດທິ ຜ່ານລະບົບທະນາຄານປະຈຳອາທິດວັນທີ (12-18/07/2019) ຈຳນວນ 61,28 ລ້ານໂດລາ. ໃນນັ້ນ, ກະແສເງິນໄຫຼອອກມີຈຳນວນ 228,59 ລ້ານໂດລາ (ສ່ວນໃຫຍ່ແມ່ນຊຳລະຄ່າສິນຄ້າ ແລະ ບໍລິການ ຈຳນວນ 77,29 ລ້ານໂດລາ, ລາຍຈ່າຍອື່ນໆ ຈຳນວນ 70,24 ລ້ານໂດລາ (ໃນນັ້ນມີ, ລັດຖະບານໂອນຊຳລະດອກເບ້ຍເງິນກູ້ຢືມຕ່າງປະເທດ ຈຳນວນ 66,46 ລ້ານໂດລາ), ວິສາຫະກິດຊຳລະເງິນກູ້ຢືມຕ່າງປະເທດ ຈຳນວນ 26,77 ລ້ານໂດລາ, ທະນາຄານທຸລະກິດຊຳລະເງິນກູ້ຢືມຕ່າງປະເທດ ຈຳນວນ 20,00 ລ້ານໂດລາ ແລະ ຖອນເງິນ ຫຼື ໂອນເງິນໄປຝາກຢູ່ຕ່າງປະເທດ ຈຳນວນ 19,70 ລ້ານໂດລາ). ສ່ວນກະແສເງິນໄຫຼເຂົ້າ ຈຳນວນ 167,30 ລ້ານໂດລາ (ສ່ວນໃຫຍ່ແມ່ນຮັບຊຳລະຄ່າສິນຄ້າ ແລະ ບໍລິການ ຈຳນວນ 84,30 ລ້ານໂດລາ, ຫົວໜ່ວຍທຸລະກິດຮັບເງິນກູ້ຢືມຈາກຕ່າງປະເທດ ຈຳນວນ 28,55 ລ້ານໂດລາ, ຮັບເງິນລົງທຶນໂດຍກົງຈາກຕ່າງປະເທດຈຳນວນ 20,47 ໂດລາ, ຖອນເງິນຝາກຈາກສະຖາບັນການເງິນຢູ່ຕ່າງປະເທດ ຈຳນວນ 15,85 ລ້ານໂດລາ).

## 3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ຈຳນວນ 589 ສະບັບ ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 03 ສະບັບ, ລວມມູນຄ່າໂອນທັງໝົດ 317,88 ຕື້ກີບ, ທຽບໃສ່ອາທິດຜ່ານມາເພີ່ມຂຶ້ນ 27,17 ຕື້ກີບເທົ່າກັບ 9,34%.

- ການໂອນເງິນຜ່ານລະບົບຊໍາລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (05-11/07/2019) ມີທັງໝົດ 3.783 ຄັ້ງ ຊຶ່ງເປັນສະກຸນເງິນກີບທັງໝົດ. ມູນຄ່າການໂອນໃນອາທິດນີ້ມີທັງໝົດ 1.077,61 ຕື້ກີບ ທຽບໃສ່ອາທິດຜ່ານມາເຫັນວ່າ ຫຼຸດລົງ 840,77 ຕື້ກີບ ຫຼື ເທົ່າກັບ 4,41%. ໃນນັ້ນ, ກະຊວງການເງິນມີການໂອນເງິນຈໍານວນ 66 ຄັ້ງ, ລວມມູນຄ່າໂອນທັງໝົດ 147,06 ຕື້ກີບ ເມື່ອທຽບໃສ່ອາທິດ ຜ່ານມາ ເຫັນວ່າ ເພີ່ມຂຶ້ນ ເປັນຈໍານວນເງິນ 102,53 ຕື້ກີບ ກວມເອົາ 230,22%.

4. <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວໃນອາທິດນີ້ ປິດຢູ່ທີ່ 776,80 ຈຸດ ເພີ່ມຂຶ້ນ ຈາກ 753,80 ຈຸດ ຫຼື ເທົ່າກັບ 3,05% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 312.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,75 ຕື້ກີບ ຫຼຸດລົງ 52,92% ເມື່ອທຽບໃສ່ອາທິດຜ່ານມາ, ໃນນັ້ນເປັນການຊື້-ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດ 51,72% ສາເຫດການເພີ່ມຂຶ້ນຂອງດັດຊະນີ ຕລຊລ ແມ່ນມາຈາກການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ EDL-GEN ແລະ BCEL.

**<u>ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)</u>**

| ບໍລິສັດ | ອາທິດກ່ອນ (05 ກໍລະກົດ - 11 ກໍລະກົດ 2019) | | | ອາທິດນີ້ (12 ກໍລະກົດ - 18 ກໍລະກົດ 2019) | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈໍານວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈໍານວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ(ກີບ) | ຈໍານວນ | ມູນຄ່າການຊື້-ຂາຍ | ລາຄາ ປ່ຽນແປງ (%) |
| BCEL | 160.700 | 936.015.000 | 5.900 | 40.300 | 237.460.000 | 5.950 | -74,92 | -74,63 | 0,85 |
| EDL-GEN | 131.200 | 493.987.000 | 3.610 | 24.700 | 92.023.000 | 3.780 | -81,17 | -81,37 | 4,71 |
| LWPC | - | - | 7.150 | - | - | 7,150 | - | - | - |
| PTL | 304.900 | 152.455.000 | 550 | 8.500 | 4.145.000 | 500 | -97,21 | -97,28 | -9,09 |
| SVN | 1.500 | 3.150.000 | 2.100 | - | - | 2.100 | -100 | -100 | - |
| PCD | - | - | 1.000 | - | - | 1.000 | - | - | - |
| LCC | 200 | 440.000 | 2.200 | 122.600 | 269.720.000 | 2.200 | 61.200 | 61.200 | - |
| MHTL | 2.100 | 6.060.000 | 2.950 | 15.000 | 44.115.000 | 2.950 | 614,29 | 627,97 | - |
| LAT | - | - | 750 | - | - | 750 | - | - | - |
| VCL | 8.700 | 9.570.000 | 1.100 | 101.400 | 106.540.000 | 1.050 | 1.065,52 | 1.013,27 | -4,55 |
| ທັງໝົດ | 609.300 | 1.601.677.000 | | 312.500 | 754.003.000 | | -48,71 | -52,92 | |

5. <u>ວຽກງານອື່ນໆທີ່ພົ້ນເດັ່ນ.</u>

- **ທຫລ ໄດ້ຮ່ວມກອງປະຊຸມ ແລະ ປຶກສາຫາລືວຽກງານທີ່ຈໍາເປັນຈໍານວນໜຶ່ງເປັນຕົ້ນ:** ❶ກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີປະຈໍາເດືອນກໍລະກົດ 2019; ❷ກອງປະຊຸມທາບທາມປະກອບຄໍາເຫັນຕໍ່ຮ່າງກົດໝາຍວ່າດ້ວຍການຟື້ນຟູ ແລະ ລົ້ມລະລາຍວິສາຫະກິດ; ❸ກອງປະຊຸມສໍາມະນາລະດັບສູງ ແລະ ກອງປະຊຸມລະດັບຮອງຜູ້ວ່າການປະຈໍາປີກ່ຽວກັບວຽກງານສະເຖຍລະພາບທາງດ້ານການເງິນ ແລະ ການຄຸ້ມຄອງທະນາຄານຄັ້ງທີ 10 ຢູ່ປະເທດມາເລເຊຍ; ❹ກອງປະຊຸມຕິດຕາມກວດກາ ແລະ ຈັດອໍາດັບໃນການຈັດຕັ້ງປະຕິບັດວຽກງານຕ້ານການຟອກເງິນ ແລະ ການສະ

ໜອງຫີນໃຫ້ແກ່ການກໍ່ການຮ້າຍ ຢູ່ປະເທດຈີນ ແລະ ❺ກອງປະຊຸມ "Bangkok Fintech Fair 2019: Collaboration for the Future of Finance" ຢູ່ປະເທດໄທ.

- **ທຫລ ໄດ້ຈັດກອງປະຊຸມພາຍໃນ ເພື່ອປຶກສາຫາລືທາງດ້ານວິຊາການທີ່ສໍາຄັນ ແລະ ວຽກງານປົ່ນອ້ອມຈໍານວນໜຶ່ງເປັນຕົ້ນ:** ❶ກອງປະຊຸມຄົ້ນຄວ້າກະກຽມເນື້ອໃນກອງປະຊຸມໃຫຍ່ຂອງພັກຄັ້ງທີ XI; ❷ກອງປະຊຸມສໍາມະນາວຽກງານປະກັນໄພເງິນຝາກໃນຫົວຂໍ້: "ພາລະບົດບາດຂອງປະກັນໄພເງິນຝາກຕໍ່ສະຖາບັນການເງິນ ແລະ ເຜີຍແຜ່ດໍາລັດວ່າດ້ວຍການປົກປ້ອງເງິນຝາກ"; ❸ກອງປະຊຸມສະພາບໍລິຫານສະຖາບັນທະນາຄານຄັ້ງທີ I ປະຈໍາປີ 2019; ❹ກອງປະຊຸມພົບປະສອງຝ່າຍລະຫວ່າງ ສໍານັກງານປົກປ້ອງເງິນຝາກ ແຫ່ງ ສປປ ລາວ (DPO) ແລະ ປະກັນໄພເງິນຝາກຫວຽດນາມ (DIV); ❺ກອງປະຊຸມຝຶກອົບຮົມໃນຫົວຂໍ້: ການວິເຄາະຄວາມຈໍາເປັນ ແລະ ການຈັດເຮັດ Training Roadmap; ❻ກອງປະຊຸມຝຶກອົບຮົມການນໍາໃຊ້, ບໍາລຸງຮັກສາ ແລະ ສ້ອມແປງຂັ້ນພື້ນຖານ ເຄື່ອງກັດໃຈທະນະບັດ; ❼ພິທີປະກາດການຈັດຕັ້ງຂັ້ນຫົວໜ້າກົມ ແລະ ຂັ້ນພະແນກ ແລະ ພິທີມອບ-ຮັບໜ້າທີ່ຜູ້ອໍານວຍການໃຫຍ່ ຕະຫຼາດຫຼັກຊັບລາວ ແລະ ❽ພິທີເຊັນສັນຍາຮ່ວມມືການຮັບສະໝັກສອບເສັງເຂົ້າຮຽນທີ່ ສະຖາບັນທະນາຄານຜ່ານລະບົບທະນາຄານຮ່ວມກັບທະນາຄານການຄ້າຕ່າງປະເທດລາວ, ທະນາຄານພັດທະນາລາວ ແລະ ທະນາຄານຮ່ວມທຸລະກິດລາວ-ຫວຽດ.
- **ທຫລ ໄດ້ສໍາເລັດວຽກງານວິຊາສະເພາະທີ່ສໍາຄັນຈໍານວນໜຶ່ງເປັນຕົ້ນ:** ❶ຮັບຮອງເອົານິຕິກໍາລຸ່ມກົດໝາຍທີ່ຕິດພັນກັບວຽກງານຫຼັກຊັບສະບັບປັບປຸງ 2 ສະບັບຄື: ຂໍ້ຕົກລົງວ່າດ້ວຍການຮັບຮອງການເຄື່ອນໄຫວທະນາຄານດູແລຊັບສິນ ແລະ ຂໍ້ຕົກລົງວ່າດ້ວຍການອອກຈໍາໜ່າຍຮຸ້ນກູ້, ພ້ອມທັງ ອອກແຈ້ງການໃຫ້ມວນຊົນຮັບຊາບກ່ຽວກັບຈໍານວນ ແລະ ລາຍຊື່ຂອງບໍລິສັດປະເມີນມູນຄ່າຊັບສິນໃນຂົງເຂດວຽກງານຫຼັກຊັບຈໍານວນ 6 ແຫ່ງ; ❷ລົງກວດກາສະຖາບັນຈຸລະພາກທີ່ບໍ່ຮັບຝາກເງິນປະຈໍາປີ 2018 ຈໍານວນທັງໝົດ 02 ແຫ່ງ: ແອວແອນແອວ ແລະ ໄຊທານີ ແລະ ❸ລົງກວດກາການຂະຫຍາຍການບໍລິການ ແລະ ຂອບເຂດໃນການນໍາໃຊ້ການບໍລິການ U-Money ຂອງບໍລິສັດ Star Fintech.
- **ທຫລ ໄດ້ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກ**❶ຜູ້ອໍານວຍການລະດັບສູງຂອງບໍລິສັດ Union Pay ພ້ອມດ້ວຍຄະນະ ແລະ ❷ເອກອັກຄະລາຊະທູດອັງກິດປະຈໍາ ສປປ ລາວ ເນື່ອງໃນໂອກາດສໍາເລັດໜ້າທີ່ການທູດຢູ່ ສປປ ລາວ.

**III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>**

- ສືບຕໍ່ດໍາເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນທີ່ໄດ້ກໍານົດໄວ້ໃນແຜນວຽກປະຈໍາປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ.
- ສືບຕໍ່ຕິດຕາມ, ກວດກາການເຄື່ອນໄຫວຂອງບັນດາທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານທີ່ໄດ້ຮັບອະນຸຍາດຈາກ ທຫລ ພ້ອມທັງສືບຕໍ່ຮ່ວມເປັນຄະນະສະເພາະກິດລົງກວດກາການເຄື່ອນໄຫວຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ.
- **ທຫລ ກະກຽມເຂົ້າຮ່ວມກອງປະຊຸມທັງພາຍໃນ ແລະ ພາຍນອກ ເພື່ອປຶກສາຫາລືວຽກງານທີ່ສໍາຄັນຈໍານວນໜຶ່ງເປັນຕົ້ນ:** ❶ກອງປະຊຸມຝຶກອົບຮົມໃນຫົວຂໍ້: "Capital Market Academy Greater Mekong Subregion (CMA-GMS) for Executive Education Program 2019" ຢູ່ປະເທດໄທ; ❷ກອງປະຊຸມສໍາມະນາກ່ຽວກັບ Product Symposium ຢູ່ປະເທດສິງກະໂປ ແລະ ❸ເຄື່ອນໄຫວທັດສະນະສຶກສາ ແລະ ຢ້ຽມຢາມທະນາຄານເພື່ອການກະເສດ ແລະ ສະຫະກອນການກະເສດ ຢູ່ປະເທດໄທ. ພ້ອມນັ້ນ, ທຫລ ກໍ່ໄດ້ໄປຢ້ຽມຊົມຫໍມູນເຊື້ອປະທານສະຫະພັນແມ່ຍິງລາວ ເນື່ອໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງອົງການຈັດຕັ້ງແມ່ຍິງລາວ ແລະ ຢ້ຽມຊົມອານຸສອນຂອງປະທານສຸພານຸວົງ ເນື່ອງໃນໂອກາດຂໍ່ານັບຮັບຕ້ອນ ແລະ ສະເຫຼີມສະຫຼອງວັນຄ້າຍວັນເກີດປະທານສຸພານຸວົງຄົບຮອບ 110 ປີ.
- **ທຫລ ກະກຽມຈັດກອງປະຊຸມ, ສໍາມະນາ ແລະ ພິທີຕ່າງໆເປັນຕົ້ນ:** ❶ກອງປະຊຸມປຶກສາຫາລືຄົ້ນຄວ້າວຽກງານອັດຕາແລກປ່ຽນ; ❷ກອງປະຊຸມວຽກງານນະໂຍບາຍສົ່ງເສີມ SMEs ແລະ ❸ກອງປະຊຸມທາບທາມຄໍາເຫັນຕໍ່ຮ່າງດໍາລັດວ່າ

ດ້ວຍການເງິນ ແລະ ການບັນຊີຂອງ ທຫລ ແລະ ❹ພິທີປະຖະກະຖາເນື່ອງໃນໂອກາດສະເຫຼີມສະຫຼອງວັນສ້າງຕັ້ງອົງການຈັດຕັ້ງສະຫະພັນແມ່ຍິງລາວຄົບຮອບ 64 ປີ.

- **ທຫລ ກະກຽມຕ້ອນຮັບການເຂົ້າຢ້ຽມຂໍ່ານັບຈາກ**ຄະນະນໍາຈາກທະນາຄານແຫ່ງລັດຫວຽດນາມພ້ອມດ້ວຍຄະນະ.

ເຊັນແທນຫົວໜ້າຫ້ອງການ

ຮອງຫົວໜ້າຫ້ອງການ

ພູມມະລີ ສີຣິພົນເດດ